## ສະເຫຼີມສະຫຼອງວັນອະນຸລັກສັດນ້ຳ -ສັດປ່າແຫ່ງຊາດ ທີ່ແຂວງອັດຕະປື

*ອັດຕະປື, ວັນທີ 12 ກໍລະກົດ 2005*

ໂຄງການຄູ້ມຄອງ ແລະ ນຳໃຊ້ຊີວະນາໆພັນແບບຍືນຍົງ ໃນເຂດດິນບໍລິເວນນ້ຳອ່າງແມ່ນ້ຳຂອງຕອນລຸ່ມ (MWBP), ຮ່ວມກັບພະແນກກະສິກຳປ່າໄມ້ ແຂວງອັດຕະປື, ຈະຈັດພິທີສະເຫຼີມສະຫຼອງວັນອະນຸລັກສັດນ້ຳ-ສັດປ່າແຫ່ງຊາດ ທີ່ບ້ານໄຊສີ, ເມືອງໄຊເສດຖາ, ແຂວງອັດຕະປື ໃນວັນທີ 13 ກໍລະກົດທີ່ຈະມາເຖິງນີ້.

ງານສະເຫຼີມສະຫຼອງວັນອະນຸລັກສັດນ້ຳ-ສັດປ່າແຫ່ງຊາດແມ່ນເຄື່ອງໝາຍສຳຄັນທີ່ສະແດງໃຫ້ເຫັນວ່າວຽກງານການ ອະນຸລັກສັດນ້ຳສັດປ່າ ແມ່ນວຽກງານຕົ້ນຕໍທີ່ຢູ່ໃນຄວາມເອົາໃຈໃສ່ຂອງພັກ ແລະ ລັດຕະຫຼອດຮອດປະຊາຊົນຊາວ ແຂວງອັດຕະປື.

ລູກປາຈຳນວນ 13 000 ໂຕຈະຖືກປ່ອຍລົງສູ່ທຳມະຊາດເພື່ອເພີ່ມທະວີຈິດສຳນຶກກ່ຽວກັບການອະນຸລັກ ສັດນ້ຳ-ສັດປ່າ ແລະ ການນຳໃຊ້ແບບຍືນຍົງ, ແລະ ເພື່ອເປັນການເພີ່ມແຫຼ່ງອາຫານໃນນຳມະຊາດ. ໂຄງການ MWBP ຈະຈັດພິທີດັ່ງກ່າວນີ້ຢູ່ສອງເມືອງເປົ້າໝາຍອື່ນອີກເຊັ່ນກັນ, “ພວກເຮົາມີແຜນທີ່ຈະໃຫ້ທຸກໆບ້ານທີ່ຕັ້ງຢູ່ຕາມແຄມນ້ຳ ໃຫ້ມີວັງສະຫງວນເພື່ອຮັກສາພັນປາພື້ນເມືອງ ເພື່ອນຳໃຊ້ເຂົ້າໃນຊີວິດການເປັນຢູ່ຂອງພວກເຮົາ ແລະ ເພື່ອຮັກສາ ຄວາມດຸ່ນດ່ຽງທາງດ້ານລະບົບນິເວດວິທະຍາ” ກ່າວໂດຍ ທ່ານ ຫວັດສະດີ ຊູມເພັດສະວົງ, ເຈົ້າເມືອງ ເມືອງ ໄຊເສດຖາ. “ການອະນຸລັກແມ່ນໜຶ່ງໃນບູລິມະສິດຂອງເມືອງພວກເຮົາ, ພວກເຮົາຍັງຄົງມີຄວາມອຸດົມສົມບູນທາງດ້ານ ຊັບພະຍາກອນທຳມະຊາດ ແລະ ພວກເຮົາຕ້ອງການໃຫ້ປະຊາຊົນນຳໃຊ້ຊັບພະຍາກອນດັ່ງກ່າວຢ່າງຊານສະຫຼາດ ແລະ ມີແຜນການເພື່ອນຳຜົນປະໂຫຍດໃຫ້ແກ່ຊຸມຊົນ” ທ່ານ ຫວັດສະດີ ກ່າວຕໍ່.

ທາງໂຄງການຈະໄດ້ຈັດການແຂ່ງຂັນຖາມ-ຕອບຄຳຖາມກ່ຽວກັບຄວາມສຳຄັນຂອງດິນບໍລິເວນນ້ຳ ແລະ ຫົວຂໍ້ທີ່ກ່ຽວ ຂ້ອງ ເພື່ອສະໜອງຂໍ້ມູນ ແລະ ຄວາມຮູ້ທີ່ກວ້າງຂວາງຂື້ນຕື່ມໃຫ້ແກ່ຜູ້ມາເຂົ້າຮ່ວມ, ແລະ ເພື່ອເສີມສ້າງບັນຍາກາດ ທີ່ມ່ວນຊື່ນ ແລະ ເປັນມິດ ລະຫວ່າງທີມງານໂຄງການ, ຜູ້ຮ່ວມງານຂັ້ນເມືອງ, ແຂວງ ແລະ ຊຸມຊົນ. ອຸປະກອນໂຄ ສະນາເຜີຍແຜ່ຂອງໂຄງການ ແມ່ນລາງວັນຂອງຜູ້ຊະນະ.

ຫຼັງຈາກຈົບພິທີການຈະມີການແຂ່ງຂັນກິລາບານເຕະມິດຕະພາບລະຫວ່າງພະນັກງານໂຄງການ, ພະແນກກະສິກຳປ່າ ໄມ້, ແລະ ພະນັກງານເມືອງ ເພື່ອເສີມສ້າງການເຮັດວຽກເປັນໝູ່ຄະນະ ເຊິ່ງມີຄວາມສຳຄັນໃນການປະສານງານ ແລະ ຮ່ວມມືໃນບາດກ້າວຕໍ່ໄປ.

ພວກເຮົາສະເຫຼີມສະຫຼອງວັນອະນຸລັກສັດນ້ຳ-ສັດປ່າແຫ່ງຊາດ ພຽງແຕ່ປີລະເທື່ອ, ແຕ່ມັນມີຄວາມສຳຄັນຫຼາຍໃນການ ທົບທວນຄືນເຖິງວຽກງານການອະນຸລັກທີ່ໄດ້ຈັດຕັ້ງປະຕິບັດມາຕະຫຼອດປີ. ໂຄງການ MWBP ແລະ ເພື່ອນຮ່ວມງານ

ແມ່ນກຳລັງປະຕິບັດວຽກຢ່າງຫ້າວຫັນເພື່ອອະນຸລັກບັນດາຊະນິດພັນທີ່ກຳລັງໃກ້ຈະສູນພັນເຊັ່ນ: ປາຂ່າ, ແຂ້ນ້ຳຈືດ, ປາບຶກ-ປາເລີມ ແລະ ນົກຊຽນ, ໃນລະດັບແຂວງ, ໂຄງການໄດ້ເຮັດວຽກຢ່າງໃກ້ຊິດກັບຜູ້ຮ່ວມງານຂັ້ນເມືອງ ແລະ ແຂວງເພື່ອຮ່ວມມື ແລະ ກວດກາຕິດຕາມວຽກງານການອະນຸລັກ ແລະ ພັດທະນາຊີວິດການເປັນຢູ່.

"ພັກ ແລະ ລັດຂອງພວກເຮົາໄດ້ກຳນົດເອົາວັນທີ 13 ກໍລະກົດ ຂອງທຸກໆປີ ເປັນວັນອະນຸລັກສັດນ້ຳ-ສັດປ່າແຫ່ງຊາດ ເພື່ອຍົກລະດັບຈິດສຳນຶກກ່ຽວກັບການນຳໃຊ້ຊັບພະຍາກອນທຳມະຊາດແບບຍືນຍົງ, ໃນຂະນະດຽວກັນກໍເພື່ອຫຼຸດຜ່ອນການຂຶ້ນກັບທຳມະຊາດຂອງຊຸມຊົນທ້ອງຖິ່ນໂດຍການສະໜອງທາງເລືອກໃນການດຳລົງຊີວິດໃຫ້ແກ່ເຂົາເຈົ້າ" ທ່ານ ສຸກໃຈ ສີລະປະ, ຫົວໜ້າພະແນກກະສິກຳ ແລະ ປ່າໄມ້ແຂວງອັດຕະປື ກ່າວເຖິງຄວາມສຳຄັນຂອງວັນດັ່ງກ່າວ.

ໂຄງການຄູ້ມຄອງ ແລະ ນຳໃຊ້ຊີວະນາໆພັນແບບຍືນຍົງ ໃນເຂດດິນບໍລິເວນນ້ຳອ່າງແມ່ນ້ຳຂອງຕອນລຸ່ມ (MWBP) ແມ່ນໂຄງການຮ່ວມລະຫວ່າງລັດຖະບານຂອງ 4 ປະເທດໃນເຂດອ່າງແມ່ນ້ຳຂອງຕອນລຸ່ມ (ກຳປູເຈຍ, ສປປ ລາວ, ໄທ ແລະ ຫວຽດນາມ), ຄູ້ມຄອງບໍລິຫານໂດຍ ອົງການສະຫະປະຊາຊາດເພື່ອການພັດທະນາ (UNDP), ສະຫະພັນ ອະນຸລັກໂລກ (IUCN), ແລະ ຄະນະກຳມະການແມ່ນ້ຳຂອງ (MRC), ໂດຍໄດ້ຮັບທຶນຈາກ ກອງທຶນອະນຸລັກສິ່ງ ແວດລ້ອມໂລກ (GEF), UNDP, ລັດຖະບານແຫ່ງປະເທດເນເທີແລນ, ຄະນະກຳມະການກອງເລຂາແມ່ນ້ຳຂອງ (MRCS), ໜ່ວຍງານການລິເລີ່ມດ້ານນ້ຳ ແລະ ທຳມະຊາດ (WANI). ງານສະເຫຼີມສະຫຼອງວັນອະນຸລັກສັດນ້ຳ-ສັດປ່າ ແຫ່ງຊາດ ແມ່ນການຮ່ວມມືກັນລະຫວ່າງ ພະແນກກະສິກຳປ່າໄມ້ ແຂວງອັດຕະປື, ໂຄງການຄູ້ມຄອງ ແລະ ນຳໃຊ້ຊີວະ ນາໆພັນແບບຍືນຍົງ ໃນເຂດດິນບໍລິເວນນ້ຳອ່າງແມ່ນ້ຳຂອງຕອນລຸ່ມ (MWBP), ແລະ ເມືອງ ໄຊເສດຖາ.

---

ສຳລັບຂໍ້ມູນເພີ່ມເຕີມ, ກະລຸນາຕິດຕໍ່:

ໂຄງການຄູ້ມຄອງ ແລະ ນຳໃຊ້ຊີວະນາໆພັນແບບຍືນຍົງ ໃນເຂດດິນບໍລິເວນນ້ຳອ່າງແມ່ນ້ຳຂອງຕອນລຸ່ມ (MWBP),
ຫ້ອງການໂຄງການທີ່ແຂວງອັດຕະປື.
ໂທ: 036 211 784, ແຟັກ: 036 211 075

ທ່ານ ສຸກສະຫວັນ ສີສຸວົງ, ຜູ້ຈັດການໂຄງການ
ໂທ: 036 211 784, ມືຖື: 020 5503 648, ອີເມລ: souksavanh.mwbp@iucnlao.org,

ທ່ານ ມາກ ດູບົວສ໌
ໂທ: 036 211 784, ມືຖື: 020 5555 685, ອີເມລ: mark.mwbp@iucnlao.org

###